28 ມັງກອນ 2005
ສະບັບຕ□ ພາສາອັງກິດ

**ບົດປະກອບຄວາມຄິດຄວາມເຫັນສະຫລຸບມ້ອນທ້າຍຂອງຄະນະກຳມະການຊີດໍຕໍ່ບົດລາຍງານການປະຕິບັດການ ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງຂອງລັດຖະບານ ສປປລາວ**

**ສະບັບຕ□**

**ຄະນະກຳມະການຮັບຟັງການລາຍງານການປະຕິບັດການລົບລ້າງ**
**ທຸກຮູບການຈຳແນກຕໍ່ແມ່ຍິງ (ຄະນະກຳມະການຊີດໍ)**
ວາລະ 32
10 ເຖິງ ວັນທີ່ 28 ມັງກອນ 2005

**ບົດປະກອບຄຳເຫັນມ້ອນທ້າຍ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ຄະນະກຳມະການຊີດໍໄດ້ພິຈາລະນາບົດລາຍງານການດຳເນີນການປະຕິບັດການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ສະບັບທີ່ 1, ທີ່ 2, ທີ່ 3, ທີ່4 ແລະ ທີ່ 5 ຂອງ ສປປລາວ (CEDAW/C/LAO/1-5) ໃນກອງປະຊຸມຄັ້ງທີ່ 675 ແລະ 676 ໃນ ວັນທີ່ 19 ມັງກອນ 2005.

**ການສະເຫນີ ໂດຍ ຜູ້ຕາງຫນ້າລັດຖະບານ ສປປລາວ**

1. ໃນການສະເຫນີບົດລາຍງານນີ້, ທ່ານຜູ້ຕາງຫນ້າສປປລາວໄດ້ຊີ້ໃຫ້ເຫັນບັນດາບັນຫາທີ່ທ້າທາຍທາງດ້ານການເມືອງ ແລະ ເສດຖະກິດສັງຄົມທີ່ປະເທດຂອງຕົນໄດ້ຜະເຊີນໃນໄລຍະກ່ອນ ແລະ ຫລັງຈາກໂດຮັບເອກກະລາດໃນປີ1975. ໃນອະດີດ ແມ່ຍິງລາວໄດ້ຖືກຖືວ່າ ເປັນຊົນຊັ້ນຕ່ຳຕ້ອຍ ແລະ ຂາດສິດທີໃນການສະແດງຄວາມຄິດຄວາມເຫັນຢ່າງອິດສະລະ ແລະ ໃນການເຂ□ູຊີວິດທາງດ້ານການເມືອງ. ຈຳນວນປະຊາກອນບັນດາຊົນຊາດຊົນເຜົ່າປະມານ80ປີເຊັ່ນຍັງສືບຕໍ່ດຳລົງຊີວິດໃນເຂດຊົນນະບົດແລະເຂດຫ່າງໄກສອກຫລີກ.

2. ລັດຖະບານໄດ້ດຳເນີນການປະຕິຮູບທີ່ສົມເຫດສົມຜົນທາງດ້ານເສດຖະກິດ ແລະ ສະຖາບັນການເມືອງເພື່ອ ແກ້ໄຂບັນຫາຄວາມທຸກຈົນ ແລະ ເພື່ອອອກຈາກສະພາບດ້ອຍພັດທະນາ. ແມ່ຍິງໄດ້ປະກອບສ່ວນທີ່ສຳຄັນເຂ□ົ່ນການພັດທະນາປະເທດຊາດ. ກອບກົດຫມາຍພາຍໃນ ຊຶ່ງລວມເຖິງການອອກກົດຫມາຍປົກປ້ອງສິດທິຂອງແມ່ຍິງ ໄດ້ຖືກສ້າງຂື້ນບົນພື້ນຖານລະບຽບຫລັກການດ້ານກົດຫມາຍ. ລັດຖະທຳມະນູນປີ1991 ແລະ ການໃຫ້ສັດຕະຍາບັນຕໍ່ກົດຫມາຍປົກປ້ອງແມ່ຍິງໃນປີ2003 ໄດ້ຄ້ຳປະກັນສິດສະເຫມີພາບລະຫວ່າງຍິງຊາຍໃນທຸກຂົງເຂດ. ກົດຫມາຍວ່າດ້ວຍການພັດທະນາແລະປົກປ້ອງແມ່ຍິງປີ2004 ຊຶ່ງ

ຖືກປະກາດໃຊ້ຢ່າງເປັນທາງການ ໂດຍ ລັດຖະດຳລັດຂອງປະທານປະເທດໄດ້ເສີມສ້າງຄວາມເປັນປຶກ ຂອງສິດທິຂອງແມ່ຍິງ ແລະ ຄວາມແທບັນແຟັນໃນການຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວ ຕໍ່ ແມ່ຍິງຂຶ້ນຫລາຍກວ່າເກົ່າ. ກົດໝາຍດັ່ງກ່າວແມ່ນໄດ້ແນໃສ່ການລົບລ້າງການຈຳແນກຕໍ່ແມ່ຍິງ, ການ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ.

**ບົດປະກອບຄຳເຫັນມ້ວນທ້າຍຕໍ່ບົດລາຍງານຂອງສປປລາວຂອງຄະນະກຳມະທານຊີດໍ**

**ອາລຳພະບົດ**

11. ຄະນະກຳມະການສັນລະເສີນສປປລາວ ທີ່ໃຫ້ສັດຕະຍະບັນແກ່ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບ ການຈຳແນກຕໍ່ແມ່ຍິງ ໂດຍບໍ່ມີຂໍ້ສະຫງວນ ແລະ ສະແດງຄວາມຂອບໃຈທີ່ສປປລາວໄດ້ສົ່ງບົດລາຍ ງານສະບັບທີ່ 1, 2, 3, 4, ແລະ 5 ລວມກັນ, ໃນຂະນະດຽວກັນກໍສະແດງຄວາມເສຍດາຍທີ່ສົ່ງບົດລາຍ ງານດັ່ງກ່າວຊ້າກວ່າກຳໜົດເວລາ.

12. ຄະນະກຳມະການສັນລະເສີນຄະນະຜູ້ແທນສປປລາວ ແລະ ສະແດງຄວາມຂອບໃຈຕໍ່ການພົບປະທີ່ສ້າງ ສັນລະຫວ່າງຄະນະຜູ້ແທນ ແລະ ບັນດາສະມາຊິກຂອງຄະນະກຳມະການ.

**ປັດໄຈທາງບວກ**

13. ຄະນະກຳມະການຕີລາຄາສູງຕໍ່ການຮັບຮອງກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງປີ 2004.

14. ຄະນະກຳມະການຊົມເຊີຍການສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ຊຶ່ງ ໄດ້ເພີ້ມຄວາມເຂັ້ມແຂງໃຫ້ແກ່ກົງຈັກແຫ່ງຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງຊາຍ.

15. ຄະນະກຳມະການ ສັນລະເສີນສປປລາວ ທີ່ ໄດ້ເພີ້ມອັດຕາສ່ວນຂອງແມ່ຍິງຢູ່ໃນສະພາແຫ່ງຊາດຢ່າງ ຫລວງຫລາຍ, ຈາກ 9.4 % ໃນສະພາຊຸດທີ່ 3 (199-1- 1997) ເປັນ 21.1 % ໃນສະ ພາຊຸດທີ່ 4 (1997-2002) ແລະ 2.2.9% ໃນສະພາຊຸດທີ່ 5 (2002-2007).

16. ຄະນະກຳມະການຕີລາຄາສູງບັນດາຄວາມພະຍາຍາມຕ້ານການຄ້າແມ່ຍິງແລະເດັກນ້ອຍ, ລວມທັງ ການ ສ້າງຕັ້ງຄະນະກຳມະການແຫ່ງຊາດຕ້ານການຄ້າມະນຸດ ພາຍໃຕ້ການຊີ້ນຳຂອງຮອງນາຍົກລັດຖະມົນ ຕີ, ບັນດາສັນຍາຮ່ວມມືກັບປະເທດໃກ້ຄຽງ ແລະ ກົນໄກໃຫມ່ເພື່ອສະຫນອງການບໍລິການແກ່ຜູ້ປະສົບ ເຄາະກຳຈາກການຄ້າທີ່ຜິດກົດໝາຍດັ່ງກ່າວ.

**ຂົງເຂດຕົ້ນຕໍຂອງຄວາມເປັນຫ່ວງ ແລະ ການສະເໜີແນະ**

17. **ຄະນະກຳມະການຖືວ່າສປປລາວມີພັນທະຕ້ອງປະຕິບັດຢ່າງເປັນລະບົບ ແລະ ຕໍ່ເນື່ອງທຸກຂໍ້ກຳໜົດຂອງສົນທິສັນຍາ. ໃນຂະນະທີ່ຖືວ່າ ສປປລາວເປັນນຶ່ງໃນບັນດາປະເທດທີ່ດ້ອຍພັດທະນາ, ຄະນະກຳມະການສະແດງຄວາມເປັນຫ່ວງວ່າ ການຂາດການພັດທະນາບໍ່ຄວນຖືກຖືວ່າເປັນຂໍ້ອ້າງໃນການສືບຕໍ່ການຈຳແນກຕໍ່ແມ່ຍິງ. ໃນເວລາດຽວກັນ ຄະນະກຳມະການເຫັນວ່າ ບັນດາຄວາມເປັນຫ່ວງ ແລະ ຂໍ້ສະເໜີແນະທີ່ກຳໜົດໄວ້ໃນບົດປະກອບຄວາມເຫັນມ້ວນທ້າຍສະບັບນີ້ຮຽກຮ້ອງ ໃຫ້ສປປລາວເອົາໃຈໃສ່ ເປັນບຸລິມະສິດແຕ່ດຽວນີ້ຈົນເຖິງມື້ສົ່ງບົດລາຍງານສະບັບໜ້າ. ຄະນະກຳມະການຮຽກຮ້ອງໃຫ້ສປປລາວສຸມໃສ່ບັນດາຂົງເຂດດັ່ງກ່າວໃນການເຄື່ອນໄຫວປະຕິບັດແລະລາຍງານກ່ຽວກັບສິ່ງທີ່ຕົນເຮັດ ແລະ ຜົນທີ່ໄດ້ຮັບໃນລາຍງານສະບັບໜ້າ. ຄະນະກຳມະການຮຽກຮ້ອງໃຫ້ສປປລາວສົ່ງບົດລາຍງານມ້ວນທ້າຍສະບັບນີ້ໄປໃຫ້ທຸກກະຊວງ ແລະ ສະພາແຫ່ງຊາດເພື່ອຮັບປະກັນການປະຕິບັດຢ່າງຄົບຖ້ວນ.**

18. ຄະນະກຳມະການເປັນຫ່ວງທີ່ສະຖານະພາບຂອງສົນທິສັນຍາຕໍ່ກົດໝາຍພາຍໃນບໍ່ຈະແຈ້ງ. ໃນຂະນະທີ່ລະບົບກົດໝາຍຂອງສປປລາວຍັງຄ່ອນຂ້າງໃໝ່ຢູ່, ຄະນະກຳມະການ ເປັນຫ່ວງທີ່ບໍ່ມີຄຳນິຍາມຂອງການຈຳແນກຕໍ່ແມ່ຍິງປາກົດຢູ່ໃນກົດໝາຍແຫ່ງຊາດ.

19. **ຄະນະກຳມະການ ສະເໜີແນະໃຫ້ ສປປລາວເອົາມາດຕະການ ເພື່ອນຳເອົາສົນທິສັນຍາເຂົ້າລະບົບກົດໝາຍພາຍໃນ ແລະ ຮັບປະກັນໃຫ້ມີການປະຕິບັດຢູ່ໃນສານ. ຄະນະກຳມະການຍັງສະເໜີແນະໃຫ້ຄຳນິຍາມ ຂອງການຈຳແນກຕໍ່ແມ່ຍິງດັ່ງທີ່ໄດ້ລະບຸໄວ້ໃນມາດຕາ1ຂອງສົນທິສັນຍາຖືກບັນຍັດໄວ້ໃນລັດຖະທຳມະນູນ ຫລື ກົດໝາຍອື່ນທີ່ກ່ຽວຂ້ອງ.**

20. ໃນຂະນະທີ່ຮັບຮູ້ວ່າການສ້າງຕັ້ງຄະນະກຳມາທິການແຫ່ງຊາດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງເປັນກົງຈັກແຫ່ງຊາດອັນໃໝ່, ຄະນະກຳມະການສະແດງຄວາມເປັນຫ່ວງຕໍ່ຄວາມບໍ່ສົມບູນຂອງໂຄງສ້າງການຈັດຕັ້ງ ແລະ ຊັບພະຍາກອນການເງິນທີ່ສະໜອງໃຫ້ກອງເລຂານຸການຂອງຄະນະກຳມາທິການເພື່ອເຊື່ອມສານບົດບາດຍິງຊາຍເຂົ້າໃນກະແສຫລັກຂອງລະບົບກົງຈັກຂອງລັດ ແລະ ປະຕິບັດບັນດານະໂຍບາຍ ຄວາມສະເໝີພາບລະຫວ່າງຍິງຊາຍ, ກໍ່ຄື ການເອື່ອຍອີງຢ່າງໜັກໃສ່ສະຫະພັນແມ່ຍິງລາວຊຶ່ງເປັນເປັນອົງການຈັດຕັ້ງມະຫາຊົນທີ່ບໍ່ມີອຳນາດບໍລິຫານ.

21. **ຄະນະກຳມະການສະເໜີແນະໃຫ້ ສປປລາວເສີມຂະຫຍາຍກົງຈັກແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງຂອງຕົນ ໂດຍການສະໜອງຊັບພະຍາກອນມະນຸດ ແລະ ການເງິນຢ່າງພຽງພໍ ລວມທັງການສ້າງກົນໄກເພື່ອເຊື່ອມຊຶມບົດບາດຍິງຊາຍຢູ່ໃນກະຊວງ ແລະ ຢູ່ໃນທຸກລະດັບກົງຈັກຂອງລັດຖະບານ. ໃນຂະນະທີ່ຮັບຮູ້ເຖິງວຽກງານອັນສຳຄັນຂອງສະຫະພັນແມ່ຍິງລາວໃນການສົ່ງເສີມສະຖານະພາບຂອງແມ່ຍິງ, ຄະນະກຳມະການສະເໜີແນະ ສປປລາວບໍ່ໃຫ້ມອບໝາຍໜ້າທີ່ປະຕິບັດສົນທິສັນຍາໃຫ້ສະເພາະແຕ່ອົງການຈັດຕັ້ງມະຫາຊົນເທົ່ານັ້ນ. ຄະນະກຳມະການຍັງສະເໜີແນະໃຫ້ສ້າງຕັ້ງອົງການຄວບ**

ຄຸ້ມກອງການຂອງລັດຖະບານຢູ່ທຸກລະດັບ ເພື່ອ ຕິດຕາມການປະຕິບັດແຜນຍຸດທະສາດແຫ່ງຊາດເພື່ອສົ່ງເສີມບົດບາດຂອງແມ່ຍິງສໍາລັບ 2005-2010.

22. ໃນຂະນະທີ່ສັງເກດເຫັນວ່າ 80%ຂອງພົນລະເມືອງດໍາລົງຊີວິດຢູ່ໃນເຂດຊົນນະບົດ, ຄະນະກໍາມະການມີຄວາມເປັນຫ່ວງເປັນໄຍຢ່າງຍິ່ງຕໍ່ຄວາມທຸກຍາກ ແລະ ຄວາມດ້ອຍພັດທະນາຂອງແມ່ຍິງທີ່ແຜ່ລາມ ໂດຍສະເພາະ ຢູ່ໃນບັນດາຊຸມຊົນຊົນນະບົດ ແລະ ຊົນຊາດຊົນເຜົ່າສ່ວນນ້ອຍ. ຄະນະກໍາມະການຍັງມີຄວາມເປັນຫ່ວງເປັນໄຍ ຕໍ່ແມ່ຍິງຊົນເຜົ່າສ່ວນນ້ອຍ ທີ່ບໍ່ມີແຫລ່ງລາຍຮັບອື່ນໆ, ອາໄສການຜະລິດຢາຝິ່ນເພື່ອລ້ຽງຊີບ. ໃນຂະນະທີ່ຊົມເຊີຍການສືບສວນຄືນບັນຫາໃບຕາດິນ, ຄະນະກໍາມະການເປັນຫ່ວງ ທີ່ການສືບສວນຄືນ ແລະ ການອອກໃບຕາດິນຄືນໃຫມ່ມີຄວາມຈໍາກັດຢູ່ສະເພາະແຕ່ 9ແຂວງ. ຄະນະກໍາມະການຍັງເປັນຫ່ວງທີ່ແມ່ຍິງຊົນນະບົດນອກຈາກ
ເຮັດວຽກງານການຜະລິດກະສິກໍາຢູ່ທົ່ງນາຫລາຍກວ່າເຄິ່ງແລ້ວ ຍັງແບບຫາບວຽກບ້ານການເຮືອນ ແລະ ລ້ຽງດູລູກອີກນໍາ.
ຄະນະກໍາມະການມີຄວາມເປັນຫ່ວງຢ່າງຍິ່ງທີ່ແມ່ຍິງຊົນນະບົດບໍ່ໄດ້ມີສ່ວນຮ່ວມຢ່າງເຕັມເມັດເຕັມຫນ່ວຍໃນການຕັດສິນບັນຫາທີ່ ສໍາຄັນກ່ຽວກັບແຜນການພັດທະນາ ຫລືໃນຄະນະກໍາມະການບ້ານ.

23. ຄະນະກໍາມະການ
ຮຽກຮ້ອງໃຫ້ສປປລາວເລັ່ງລັດແຜນການລົບລ້າງຄວາມທຸກຍາກໃນຫມູ່ແມ່ຍິງຂອງຕົນ ໂດຍສະເພາະແມ່ນແມ່ຍິງຊົນນະບົດ, ດ້ວຍການຂົນຂວາຍການຊ່ວຍເຫລືອສາກົນຢ່າງຕັ້ງຫນ້າ,
ນໍາໃຊ້ຫັດສະນະບົດບາດຍິງຊາຍ ເຂົ້າໃນທຸກແຜນງານພັດທະນາ ແລະ
ສົ່ງເສີມໃຫ້ແມ່ຍິງມີສ່ວນຮ່ວມໃນການຕັດສິນໃຈ ຢ່າງເຕັມສ່ວນກ່ຽວກັບແຜນງານ ແລະ
ການດໍາເນີນດັ່ງກ່າວ. ຄະນະກໍາມະການ
ຍັງຮຽກຮ້ອງໃຫ້ສປປລາວເພີ້ມຄວາມພະຍາຍາມເພື່ອເຮັດໃຫ້ແມ່ຍິງຊົນຊາດສ່ວນນ້ອຍ
ທີ່ອາໄສການຜະລິດຢາຝິ່ນ ມີວິທີການທໍາມາຫາກິນອື່ນໆທີ່ທົດແທນການປູກຝິ່ນ ແບບຍືນຍົງ.
ຄະນະກໍາມະການ ສະເຫນີແນະໃຫ້ມີການສືບສວນແລະຂື້ນທະບຽນຄືນໃຫມ່ໃນທຸກແຂວງ
ໂດຍບໍ່ມີການຈໍາແນກຕໍ່ແມ່ຍິງ, ແລະ
ຂໍຮ້ອງໃຫ້ສປປລາວສະຫນອງຂໍ້ມູນຂ່າວສານລະອຽດກ່ຽວກັບຜົນທີ່ໄດ້ຮັບໃນບົດລາຍງານສະບັບຫນ້າ.
ຄະນະກໍາມະການ
ຍັງສະເຫນີແນະໃຫ້ສປປລາວເອົາມາດຕະການເພື່ອແບ່ງເບົາພາລະແບກຫາບຂອງແມ່ຍິງ,
ຮວມທັງການຕອບສະຫນອງເທັກໂນໂລຍີໃຫມ່ແກ່ຊາວນາຍິງ ແລະ
ສຶກສາອົບຮົມຜູ້ຊາຍກ່ຽວກັບການຮັບຜິດຊອບຮ່ວມກັນໃນດ້ານການດູແລຄອບຄົວ. ຄະນະກໍາມະການສະເຫນີຢ່າງຫນັກແຫນ້ນໃຫ້ສປປລາວຮັບປະກັນການມີສ່ວນຮ່ວມທີ່ເທົ່າທຽມກັນຂອງແມ່ຍິງຊົນນະບົດໃນຄະນະກໍາມະການຂັ້ນບ້ານ.

24. ເຖິງວ່າຈະມີຄວາມກ້າວຫນ້າບາງປະການ,
ຄະນະກໍາມະການມີຄວາມເປັນຫ່ວງຈໍ່ອັດຕາການກົກຫນັງສືຂອງແມ່ຍິງທີ່ຍັງສູງຫລາຍເຖິງ 40%, ແລະ
ຄວາມແຕກໂຕນກັນຢ່າງຫລວງຫລາຍລະຫວ່າງອັດຕາການຮູ້ຫນັງສືຂອງຜູ້ຊາຍ ແລະ ແມ່ຍິງ ແລະ

ອັດຕາການຮູ້ຫນັງສືຂອງແມ່ຍິງໃນຕົວເມືອງ ແລະ ໃນຊົນນະບົດ.ຄະນະກຳມະການເປັນຫ່ວງ ສະເພາະຢ່າງຍິ່ງຕໍ່ອັດຕາການຮູ້ຫນັງສືໃນຫມູ່ແມ່ຍິງຊົນຊາດສ່ວນນ້ອຍ ທີ່ຍັງຕ່ຳຫລາຍ. ຄະນະກຳມະການເປັນຫ່ວງທີ່ ແຜນການທີ່ຈະໃຫເຮັດໃຫ້ການສຶກສາຂັ້ນປະຖົມໂດຍເປັນພາກບັງຄັບນັ້ນຖືກເລື່ອນຈາກປີ 2000 ເປັນປີ 2010.

25. ຄະນະກຳມະການຮຽກຮ້ອງໃຫ້ສປປລາວ ເອົາມາດຕະການອັນເຫມາະສົມຢ່າງຮີບດ່ວນ, ຮວມທັງມາດຕະການສະເພາະຊົ່ວຄາວ ຕາມມາດຕາ 4 ວັກ ທີ່ 1 ຂອງສົນທິສັນຍາ ແລະ ບົດສະເຫນີແນະທີ່ 25 ຂອງຄະນະກຳມະການກ່ຽວກັບມາດຕະການສະເພາະຊົ່ວຄາວເພື່ອຫລຸດຜ່ອນອັດຕາການກືກຫນັງສືຂອງແມ່ຍິງ ແລະ ການໃຫ້ການສຶກສາແກ່ແມ່ຍິງ, ທັງໃນລະບົບ ແລະ ນອກລະບົບ, ໃນທຸກລະດັບອາຍຸ ໂດຍສະເພາະແມ່ຍິງໃນເຂດຊົນນະບົດ ແລະ ຊົນຊາດກຸ່ມນ້ອຍ. ຄະນະກຳມະການຍັງຮຽກຮ້ອງໃຫ້ສປປລາວປະຕິບັດການສຶກສາຂັ້ນຕົ[illegible]ພາກບັງຄັບໂດຍບໍ່ເສຍຄ່າໃນທົ່ວປະເທດໄວເທົ່າທີ່ຈະໄວໄດ້. ຄະນະກຳມະການສະເຫນີແນະຕື່ມໃຫ້ສປປລາວພິຈາລະນາຂົນຂວາຍການຊ່ວຍເຫລືອສາກົນເພື່ອຈຸດປະສົງດັ່ງກ່າວ.

26. ໃນຂະນະທີ່ຮັບຮູ້ວ່າມີຄວາມກ້າວຫນ້າໃນຊຸມປີຜ່ານມາ, ຄະນະກຳມະການມີຄວາມເປັນຫ່ວງຢ່າງຍິ່ງຕໍ່ອັດຕາການ ຕາຍຂອງແມ່ ແລະ ເດັກອ່ອນທີ່ຍັງສູງຫລາຍ ແລະ ອັດຕາການຈະເລີນພັນທີ່ຍັງສູງ, ໂດຍສະເພາະໃນຫມູ່ແມ່ຍິງໃນເຂດຊົນນະບົດ ຫ່າງໄກສອກຫລີກ ແລະ ໃນຊົນຊາດກຸ່ມນ້ອຍ. ຄະນະກຳມະການເປັນຫ່ວງ ທີ່ບໍ່ມີສຸກສາລາ ແລະ ແພດຫມໍຢູ່ຫມູ່ບ້ານຊົນນະບົດຫ່າງໄກສອກຫລີກ ກໍ່ຄືການຂາດຄວາມຮັບຮູ້ກ່ຽວກັບການສຸຂະພາບຈະເລີນພັນ, ການວາງແຜນຄອບຄົວ, ລວມທັງການໃຊ້ຢາຄຸມກຳເນີດ ແລະ ການມີລູກຫ່າງ ໃນຫມູ່ແມ່ຍິງ ແລະ ຊາວຫນຸ່ມ.

27. ຄະນະກຳມະການສະເຫນີແນະໃຫ້ສປປລາວເລັ່ງລັດການປະຕິບັດນະໂຍບາຍດ້ານປະຊາກອນ ໂດຍສຸມໃສ່ການຂະຫຍາຍຕາຫນ່າງສາທາລະນະສຸກ ແລະ ພະນັກງານແພດຫມໍໃຫ້ທົ່ວປະເທດ ແລະ ໄປເຖິງເຂດຊົນນະບົດຫ່າງໄກສອກຫລີກ ເພື່ອຜົນປະໂຫຍດຂອງແມ່ຍິງຊົນຊາດກຸ່ມນ້ອຍ; ໂດຍສົ່ງເສີມແຜນງານສຸຂະສຶກສາ, ບໍ່ສະເພາະແຕ່ ໃນຫມູ່ແມ່ຍິງເທົ່ານັ້ນ  ແຕ່ໃຫ້ກວມລວມໄປເຖິງ ຜູ້ຊາຍ ແລະ ຊາວຫນຸ່ມ ແລະ ຍິງຫນຸ່ມນຳ, ກ່ຽວກັບສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວ, ແລະ ໂດຍການຕອບສະຫນອງຢາຄຸມກຳເນີດຢ່າງງ່າຍດາຍ.

28. ຄະນະກຳມະການເປັນຫ່ວງທີ່ ຍັງມີການຖືທັດສະນະບົດບາດຍິງຊາຍແບບດັ້ງເດີມຢ່າງຫລວງຫລາຍ, ຊຶ່ງນຳໄປສູ່ຄວາມບໍ່ສະເຫມີພາບໃນການນຳພາ ແລະ ການຕັດສິນບັນຫາໃນທຸກຂົງເຂດວຽກງານ, ຮວມທັງໃນຄອບຄົວ, ຊຸມຊົນ ແລະ ໃນສາທາລະນະ.

29. ຄະນະກຳມະການສະເຫນີແນະໃຫ້ ເຮັດຂະບວນການໃນທົ່ວປະເທດ ເພື່ອລຶບລ້າງຄວາມເຂົ້າໃຈກ່ຽວກັບບົດບາດຍິງຊາຍແບບດັ້ງເດີມທີ່ມີຢູ່ຢ່າງຫລວງຫລາຍ ແລະ ສົ່ງເສີມຄວາມຮັບຮູ້ຂອງມວນຊົນກ່ຽວກັບປະເດັນຄວາມສະເຫມີພາບລະຫວ່າງຍິງຊາຍໃນທຸກຂົງເຂດ.

30. ຄະນະກຳມະການເປັນຫ່ວງທີ່ ສປປລາວປະເຊີນກັບໄພອັນຕະລາຍຂອງໂລກເອດສ໌ ແລະ ພະຍາດຕິດຕໍ່ທາງເພດສຳພັນອື່ນໆຫລາຍຂື້ນ ໂດຍສະເພາະຢູ່ຕາມເສັ້ນທີ່ມີການກໍ່ສ້າງ ແລະຕາມ ເສັ້ນທາງການຄ້າ.

31. ຄະນະກຳມະການສະເຫນີແນະໃຫ້ສປປລາວເອົາມາດຕະການທີ່ຈຳເປັນເພື່ອໃຫ້ຄວາມຮູ້ກ່ຍວກັບຄວາມສ່ຽງຂອງການຕິດໂລກເອດສ໌ໃນຫມູ່ຜູ້ຊາຍ ແລະ ແມ່ຍິງ, ໂດຍສະເພາະໃນເຂດຊົນນະບົດ, ຂົງເຂດທີ່ມີການກໍ່ສ້າງ ແລະ ຕາມເສັ້ນທາງການຄ້າທີ່ມີມາກ່ອນ ແລະ ຕາມເສັ້ນທາງໃຫມ່ທີ່ຈະເກີດຂື້ນ.

32. ໃນຂະນະທີ່ຮັບຮູ້ວ່າໄດ້ມີການວາງອອກຊື່ງບັນດາມາດຕະການໃຫມ່ທີ່ຕ້ານການຄ້າມະນຸດທີ່ຜິດກົດຫມາຍທີ່ພວມເພີ້ມຂື້ນຢູ່ພາຍໃນປະເທດ ແລະ ໃນຂົງເຂດ, ລວມທັ້ງລະບົບການລົງໂທດທາງດ້ານກົດຫມາຍ, ການຮ່ວມມືກັບປະເທດໃກ້ຄຽງ ແລະ ການສ້າງກົນໄກທາງດ້ານການບໍລິການ ເພື່ອຊ່ວຍ ແລະ ປົກປ້ອງຜູ້ປະສົບເຄາະກຳຈາກການຄ້າມະນຸດ,
ຄະນະກຳມະການເປັນຫ່ວງທີ່ບໍ່ມີການສະຫນອງຂໍ້ມູນຂ່າວສານກ່ຽວກັບການດຳເນີນວຽກຕົວຈິງຂອງກົນໄກດັ່ງກ່າວວ່າເຮັດແບບໃດ ແລະ
ຜົນກະທົບຂອງມັນຕໍ່ການຕ້ານການຄ້າແມ່ຍິງແລະເດັກນ້ອຍເປັນແນວໃດ. ຄະນະກຳມະການ
ເປັນຫ່ວງຕໍ່ການເພີ້ມຂື້ນຂອງການຄ້າມະນຸດທີ່ຜິດກົດຫມາຍດັ່ງກ່າວ.
ຄະນະກຳມະການເປັນຫ່ວງຕໍ່ການກົດຂີ່ຂູດຮີດແມ່ຍິງຈາກການຄ້າປະເວນີ ແລະ
ການຂາດຂໍ້ມູນຂ່າວສານກ່ຽວກັບການປາກົດມີ ແລະ ຂະຫນາດຂອງບັນຫາດັ່ງກ່າວ.

33. ຄະນະກຳມະການຮ້ອງຂໍໃຫ້ສປປລາວສະຫນອງຂໍ້ມູນຂ່າວສານລະອຽດກ່ຽວກັບຜົນກະທົບຂອງບັນດາມາດຕະການຕ້ານການຄ້າແມ່ຍິງແລະເດັກຍິງ, ຮວມທັງຈຳນວນ ແລະ
ທ່າອ່ຽງຂະຫຍາຍຂອງການຈັບກຸມພວກຄ້າເຖື່ອນ, ຈຳນວນຜູ້ປະສົບເຄາະກຳ ແລະ ສິ່ງທີ່ເຂົາເຈົ້າຈະໄດ້ຮັບຜົນປະໂຫຍດຈາກການບໍລິການໃນການກັບຄືນ ແລະ ຈັດສົ່ງຖິ່ນຖານເດີມ ແລະ
ຂ່າວສານກ່ຽວກັບມາດຕະການເພີ້ມເຕີມ ກ່ຽວກັບການຕ້ານການຄ້າມະນຸດທີ່ຜິດກົດຫມາຍດັ່ງກ່າວ.
ຄະນະກຳມະການຍັງສະເຫນີແນະໃຫ້ ສປປລາວເກັບກຳຂໍ້ມູນຂ່າວສານ ແລະ
ດຳເນີນສຶກສາກ່ຽວກັບລະດັບການຂູດຮີດທາງດ້ານປະເວນີ ແລະ ເອົາມາດຕະການປ້ອງກັນທີ່ຈຳເປັນເພື່ອແກ້ໄຂບັນຫາ ຮວມທັງມາດຕະການຫລຸດຜ່ອນຄວາມຕ້ອງການດ້ານໂສເພນີ.

34. ຄະນະກຳມະການເປັນຫ່ວງທີ່ ມີຜູ້ຕາງຫນ້າຂອງແມ່ຍິງຢູ່ໃນອຳນາດການປົກຄອງ ຫນ້ອຍຫລາຍໂດຍທົ່ວໄປ ທັງໃນລະດັບຊາດ ແລະ ໃນລະດັບທ້ອງຖິ່ນ, ແລະ ໃນອົງການຕຸລາການ.

ໂດຍພິຈາລະນາວ່າ 80%ຂອງພົນລະເມືອງດຳລົງຊີວິດຢູ່ໃນເຂດຊົນນະບົດ ແລະ ນາຍບ້ານ ແລະ ຄະນະກຳມະການບ້ານເປັນຜູ້ ແກ້ໄຂທຸກບັນຫາປະຈຳວັນຂອງບ້ານ, ຄະນະກຳມະການເປັນຫ່ວງຢ່າງຍິ່ງທີ່ ຈຳນວນນາຍບ້ານທີ່ເປັນຍິງມີໜ້ອຍກວ່າ 1% ແລະ ມີພຽງສະມາຊິກສະຫະພັນແມ່ຍິງລາວ 1 ຄົນເທົ່ານັ້ນທີ່ຕາງໜ້າແມ່ຍິງໃນຄະນະກຳມະການບ້ານ.

35. ຄະນະກຳມະການສະເໜີແນະໃຫ້ສປປລາວສຶກສາຜົນກະທົບ